# ທະນາຄານພົງສະຫວັນຈຳກັດ

# ເງື່ອນໄຂ ແລະ ຂໍ້ຕົກລົງຂອງການນຳໃຊ້ບັດ

**ມາສເຕີ້ຄາດ/ວີຊ້າ**

ການອອກບັດ ມາສເຕີ້ຄາດ/ວີຊ້າ (ຕໍ່ໄປຈະເອີ້ນວ່າ"ບັດ")ໂດຍທະນາຄານພົງສະຫວັນຈຳກັດ(ຕໍ່ໄປຈະເອີ້ນວ່າ"ທະນາຄານ") ໃຫ້ແກ່ບັນດາສະມາຊິກຜູ້ຖືບັດ ແລະ ລວມເຖິງການນຳໃຊ້ບັດໂດຍສະມາຊິກຜູ້ຖືບັດແມ່ນຖືວ່າມອບຢູ່ໃນເງື່ອນໄຂ ແລະຂໍ້ກຳນົດດັ່ງລຸ່ມນີ້ ເຊິ່ງຜູ້ຖືບັດໄດ້ຮັບຮູ້ໃນເວລາທີ່ສະຫມັກ ແລະ/ຫຼືເວລາຮັບເອົາບັດ. ຂໍ້ກຳນົດແລະເງື່ອນໄຂເຫຼົ່ານີ້ຈະມີຜົນຜູກພັນຕໍ່ສະມາຊິກຜູ້ຖືບັດທັນທີທີ່ສະມາຊິກຜູ້ຖືບັດໄດ້ຮັບບັດ ຫຼືໄດ້ນຳໃຊ້ບັດໂດຍຜູ້ຖືບັດເອງ .

**1. ນິຍາມ**

1.1 ຄວາມຫມາຍຂອງຄຳສັບທີ່ໃຊ້ພາຍໃນຂໍ້ຕົກລົງສະບັບນີ້ໄດ້ກຳນົດໄວ້ດັ່ງຕໍ່ໄປນີ້ ເວັ້ນແຕ່ຈະໄດ້ໃຫ້ຄວາມຫມາຍເປັນຢ່າງອື່ນ:

a.) "ເອທີເອັມ" ແມ່ນ ເຄື່ອງຈັກຖອນເງິນສົດອັດຕະໂນມັດຂອງທະນາຄານ ຫຼືຂອງທະນາຄານສະມາຊິກຂອງມາສເຕີ້ຄາດ /ວີຊ້າ.

b.) "ທະນາຄານ"ໝາຍເຖິງ ທະນາຄານ ພົງສະຫວັນ ຈຳກັດ , ເປັນທະນາຄານທີ່ຈັດຕັ້ງຂຶ້ນໃນປະເທດ ສປປ .ລາວ,ຕັ້ງຢູ່ອາຄານເລກທີ່ 077, ໜ່ວຍ 09, ບ້ານອານຸ, ຖະໜົນສາມແສນໄທ, ເມືອງ ຈັນທະບູລີ,ນະຄອນຫລວງວຽງຈັນ, ສ.ປ.ປ.ລາວ.

c.) "ເອກະສານແຈ້ງຍົກເລີກ" ໝາຍເຖິງ ເອກະສານທີ່ມີລາຍການເລກບັນຊີທີ່ຖືກຍົກເລີກໂດຍທະນາຄານຫຼືບັນດາທະນາຄານທີ່ເປັນສະມາຊິກມາສເຕີ້ຄາດ /ວີຊ້າ.

d.) "ບັດ" ໝາຍເຖິງ ບັດມາສເຕີ້ຄາດ/ບັດວີຊ້າທີ່ທະນາຄານເປັນຜູ້ອອກໃຫ້ແກ່ສະມາຊິກບັດ.

e.) "ບັນຊີຂອງບັດ" ໝາຍເຖິງ ບັນຊີຂອງສະມາຊິກບັດມາສເຕີ້ຄາດ /ບັດວີຊ້າ ທີ່ໃຊ້ບັນທຶກທຸລະກຳການຊຳລະເງິນເພື່ອຊື້ສິນຄ້າ, ບໍລິການ ຫຼືຖອນເງິນສົດລ່ວງໜ້າ ທີ່ນຳໃຊ້ບັດທັ້ງບັດຫຼັກແລະບັດເສີມເຮັດລາຍການ ລວມເຖິງບັນທຶກລາຍການຄ່າທຳນຽມລາຍປີ ຫຼືຄ່າທຳນຽມອື່ນໆ ທີ່ທະນາຄານຮຽກເກັບ.

f.) "ວົງເງິນອະນຸມັດຂອງບັດ" ຫມາຍເຖິງ ວົງເງິນທີ່ກຳນົດໃຫ້ໂດຍທະນາຄານສຳລັບສະມາຊິກຜູ້ຖືບັດຫຼັກລວມທັງສະມາຊິກຜູ້ຖືບັດເສີມ ທີ່ຈະສາມາດນຳໃຊ້ໄດ້ໃນຊ່ວງໄລຍະເວລາໜຶ່ງແລະວົງເງິນດັ່ງກ່າວອາດມີການປ່ຽນແປງບາງຄັ້ງຄາວ ໂດຍທະນາຄານຈະແຈ້ງຢ່າງເປັນລາຍລັກອັກສອນໄປຍັງສະມາຊິກຜູ້ຖືບັດ.

g.) "ໃບຢັ້ງຢືນຖານະການເງິນ" ຫມາຍເຖິງ ເອກະສານ ຫຼືເອກະສານອີເລັກໂທຣນິກທີ່ໃຊ້ເພື່ອແຈ້ງສະຖານະ ແລະລາຍການເຄື່ອນໄຫວທັງຫມົດຂອງບັນຊີຂອງຜູ້ຖືບັດ, ໃບຢັ້ງຢືນຖານະການເງິນຈະສົ່ງໂດຍທາງໄປສະນີ ຫຼືຜ່ານລະບົບຈົດຫມາຍອີເລັກໂທຣນິກໄປເຖິງສະມາຊິກຜູ້ຖືບັດທຸກໆເດືອນ ຫຼືຕາມໄລຍະເວລາທີ່ທາງທະນາຄານກຳນົດຕາມຄວາມເຫມາະສົມ, ທະນາຄານ ຈະຖືສິດໃນການພິຈາລະນາອາດຈະບໍ່ສົ່ງໃບຢັ້ງຢືນຖານະການເງິນຖ້າໃນໄລຍະເວລາທີ່ກຳນົດນັ້ນບໍ່ມີຈຳນວນເງິນທີ່ຕ້ອງຈ່າຍຄືນທະນາຄານຫຼືບັນຊີບໍ່ມີລາຍການເຄື່ອນໄຫວ.

h.) "ສະມາຊິກຜູ້ຖືບັດ" ໝາຍເຖິງ ບຸກຄົນທີ່ສະໝັກເປັນສະມາຊິກບັດ ແລະທະນາຄານອອກບັດໃຫ້ໂດຍມີຊື່ບຸກຄົນນັ້ນປະກົດຢູ່ເທິງບັດ.

i.) "ການເບີກຖອນເງິນສົດລ່ວງໜ້າ" ໝາຍເຖິງ ການຖອນເງິນສົດຈາກບັນຊີຂອງບັດໂດຍເຮັດລາຍການທີ່ສາຂາຂອງທະນາຄານເອງ ຫຼືສາຂາຂອງທະນາຄານທີ່ເປັນສະມາຊິກມາສເຕີ້ຄາດ/ວີຊ້າຫຼືເຮັດລາຍການຜ່ານຕູ້ເອທີເອັມຂອງທະນາຄານເອງ ຫຼືຕູ້ເອທີເອັມຂອງທະນາຄານທີ່ເປັນສະມາຊິກມາສເຕີ້ຄາດ/ວີຊ້າ.

j.) "ຄ່າທຳນຽມການເບີກຖອນເງິນສົດລ່ວງໜ້າ" ໝາຍເຖິງ ການຮຽກເກັບຄ່າບໍລິການເບີກເງິນສົດລ່ວງໜ້າແຕ່ລະລາຍການນຳສະມາຊິກຜູ້ຖືບັດ.

k.) "ຮ້ານຄ້າ" ໝາຍເຖິງ ສະຖານທີ່ຂາຍເຄື່ອງ/ບໍລິການທີ່ຮັບການຊຳລະຄ່າສິນຄ້າດ້ວຍບັດ, ການຊຳລະດັ່ງກ່າວແມ່ນຈະມີການຮຽກເກັບຈາກບັນຊີຂອງຜູ້ຖືບັດ

l.) "ຈຳນວນເງິນຂັ້ນຕ່ຳທີ່ຄົບກຳນົດຊຳລະ"ໝາຍເຖິງ ຈຳນວນເງິນຂັ້ນຕ່ຳ ທີ່ສະມາຊິກຜູ້ຖືບັດຈະຕ້ອງຊຳລະເງິນເມື່ອ ເຖິງວັນທີ່ຄົບກຳນົດຊຳລະເງິນ.

m.) "ເດືອນ" ໝາຍເຖິງ ເດືອນໃນປະຕິທິນ.

n.) "ວັນທີ່ຄົບກຳນົດຊຳລະເງິນ" ໝາຍເຖິງ ວັນທີ່ລະບຸໃນໃບຢັ້ງຢືນຖານະການເງິນທີ່ສະມາຊິກຜູ້ຖືບັດຕ້ອງຊຳລະເງິນຄົງຄ້າງທີ່ຄົບກຳນົດຊຳລະ ໂດຍອາດຈະຈ່າຍຊຳລະເຕັມຈຳນວນ ຫຼືຕາມຈຳນວນເງິນຂັ້ນຕ່ຳທີ່ສະມາຊິກຖືບັດຕ້ອງຈ່າຍແລ້ວແຕ່ເງື່ອນໄຂຕາມທີ່ຕົກລົງກັບທະນາຄານ.

o.) "ລະຫັດ (PIN)" ໝາຍເຖິງ ລະຫັດສ່ວນຕົວທີ່ອອກໃຫ້ສະມາຊິກຜູ້ຖືບັດຫຼັກ ຫຼືບັດເສີມ.

p.) "ບັດເສີມ" ໝາຍເຖິງ ບັດມາສເຕີ້ຄາດບັດວີຊ້າ ທີ່ອອກໂດຍທະນາຄານໃຫ້ກັບສະມາຊິກຜູ້ຖືບັດເສີມ.

q.) "ສະມາຊິກຜູ້ຖືບັດເສີມ" ໝາຍເຖິງ ບຸກຄົນທີ່ຜູ້ຖືບັດຫຼັກຂໍໃຫ້ທະນາຄານອອກບັດເສີມໃຫ້ແກ່ບຸກຄົນດັ່ງກ່າວ ແລະທະນາຄານໄດ້ອອກບັດເສີມໃຫ້ໂດຍມີຊື່ບຸກຄົນນັ້ນປະກົດຢູ່ເທິງບັດເສີມ ແລະຜູ້ຖືບັດຫຼັກຍິນຍອມໃຫ້ໃຊ້ບັນຊີຂອງເຈົ້າຂອງບັດຫຼັກເອງ.


Unit 01, Ban Phakhao, Kaysone Phomvihanh Road, Xaythany District, Vientiane Capital, Lao P.D.R.
Tel:(+856-21) 711 511-533, Fax:(+856-21) 711 500, Email:info@phongsavanhbank.com, www.phongsavanhbank.com

r.) "ວີຊ້າ" ໝາຍເຖິງ Visa International Service Association ທີ່ເປັນບໍລິສັດຈົດທະບຽນໃນລັດ Delaware ແລະມີສຳນັກງານໃຫຍ່ຕັ້ງຢູ່ສະຫະລັດອາເມຣິກາ, ອາຄານເລກທີ່ 3125, Clearview Way, San Mateo, CA 94402 United States ທີ່ທະນາຄານເປັນສະມາຊິກຫຼັກ.

s.) "ມາສເຕີ້ຄາດ" ໝາຍເຖິງ MasterCard International Service Association ທີ່ເປັນບໍລິສັດຈົດທະບຽນໃນລັດDelawareແລະມີສຳນັກງານໃຫຍ່ຕັ້ງຢູ່ສະຫະລັດອາເມຣິກາ, ອາຄານເລກທີ່ 888, Seventh Avenue, New York, NY 10106, United States Of America ທີ່ທະນາຄານເປັນສະມາຊິກຫຼັກ.

t.) "ທະນາຄານສະມາຊິກວີຊ້າ" ໝາຍເຖິງ ສະຖາບັນການເງິນທີ່ເປັນສະມາຊິກຂອງວີຊ້າ.

u.) "ທະນາຄານສະມາຊິກມາສເຕີ້ຄາດ" ໝາຍເຖິງ ສະຖາບັນການເງິນທີ່ເປັນສະມາຊິກຂອງມາສເຕີ້ຄາດ

v.) "ທະນາຄານສະມາຊິກ" ໝາຍເຖິງ ສະຖາບັນການເງິນທີ່ເປັນສະມາຊິກຂອງວີຊ້າ ຫຼືສະຖາບັນການເງິນທີ່ເປັນສະມາຊິກຂອງມາສເຕີ້ຄາດ

1.2 ການຂະຫຍາຍຄຳສັບ

1.2.1 ໃນກໍລະນີທີ່ມີການກຳນົດຊ່ວງໄລຍະເວລາທັງທີ່ໃຊ້ໃນການຄຳນວນຫຼືການກຳນົດວັນທີ່ເລີ່ມຕົ້ນຂອງການໃຫ້ປະຕິບັດວຽກໃດໜຶ່ງ ຊ່ວງໄລຍະເວລາດັ່ງກ່າວນັ້ນໃຫ້ລວມວັນທີ່ກຳນົດໃຫ້ເປັນວັນທີ່ເລີ່ມຕົ້ນນັ້ນດ້ວຍ ເວັ້ນແຕ່ທີ່ທະນາຄານຈະຖືສິດໃນການກຳນົດເປັນຢ່າງອື່ນ.

1.2.2 ໃນທຸກແຫ່ງທີ່ໃຊ້ຄຳວ່າ "ສະມາຊິກຜູ້ຖືບັດ" ໃຫ້ຫມາຍຄວາມເຖິງ ສະມາຊິກຜູ້ຖືບັດຫຼັກ ແລະສະມາຊິກຜູ້ຖືບັດເສີມ.

## 2. ການຍອມຮັບບັດ

2.1 ໃນການທີ່ທະນາຄານໄດ້ພິຈາລະນາອອກບັດໃຫ້ກັບສະມາຊິກຜູ້ຖືບັດຫຼັກແລະສະມາຊິກຜູ້ຖືບັດເສີມນັ້ນ, ສະມາຊິກຜູ້ຖືບັດຫຼັກແລະສະມາຊິກຜູ້ຖືບັດເສີມແມ່ນຕົກລົງທີ່ຈະປະຕິບັດຕາມຂໍ້ກຳນົດ ແລະເງື່ອນໄຂທີ່ໄດ້ລະບຸໄວ້ໃນຂໍ້ຕົກລົງນີ້ ລວມທັງຂໍ້ກຳນົດ ແລະເງື່ອນໄຂອື່ນໆ ທີ່ທະນາຄານອາດຈະປະກາດໃຫ້ໃຊ້ພາຍຫລັງ.

2.2 ບັດທີ່ທະນາຄານອອກໃຫ້ແກ່ສະມາຊິກຜູ້ຖືບັດ ຈຳກັດການນຳໃຊ້ໃຫ້ສະເພາະສະມາຊິກຜູ້ມີຊື່ປາກົດຢູ່ເທິງບັດເທົ່ານັ້ນ ນຳໄປໃຊ້ກັບຮ້ານຄ້າ, ເຄື່ອງເອທີເອັມ (ATM) ແລະສະຖາບັນການເງິນທີ່ໄດ້ກຳນົດໄວ້ເຊິ່ງໄດ້ຮັບອານຸຍາດໃຫ້ສາມາດຮັບບັດມາສເຕີ້ຄາດ/ບັດວີຊ້າເພື່ອຊຳລະເງິນ, ສະມາຊິກບັດແມ່ນເຫັນດີທີ່ຈະເຊັນໃສ່ຫລັງບັດທັນທີເມື່ອຮັບເອົາບັດ.

2.3 ສະມາຊິກຜູ້ຖືບັດຈະບໍ່ຍອມ ຫຼືອະນຸຍາດໃຫ້ບຸກຄົນອື່ນໃຊ້ບັດ ແລະຈະບໍ່ໂອນ ຫຼືມອບອຳນາດການຄອບຄອງບັດ ຫຼືນຳບັດໄປໃຊ້ໃນຈຸດປະສົງທີ່ທະນາຄານບໍ່ອະນຸຍາດ.

2.4 ເພື່ອທີ່ຈະສາມາດເຮັດລາຍການຜ່ານເຄື່ອງເອທີເອັມ (ATM) ໄດ້, ທະນາຄານຈະອອກລະຫັດ (PIN) ໃຫ້ກັບສະມາຊິກຜູ້ຖືບັດ, ລະຫັດ (PIN) ນີ້ເປັນລະຫັດສ່ວນຕົວທີ່ເປັນຄວາມລັບທີ່ສຸດ ແລະບໍ່ແມ່ນບອກໃຫ້ບຸກຄົນອື່ນບໍ່ວ່າຈະໃນກໍລະນີໃດກໍ່ຕາມ.

2.5 ສະມາຊິກຜູ້ຖືບັດຈະຕ້ອງຮັບຜິດຊອບລາຍການທັງຫມົດທີ່ເກີດຂື້ນຈາກການໃຊ້ລະຫັດ (PIN), ສະມາຊິກຜູ້ຖືບັດຈະຕ້ອງມີວິທີການປ້ອງກັນການທຸຈະຫຼິດທີ່ເກີດຈາກການນຳໃຊ້ລະຫັດຢ່າງບໍ່ເໝາະສົມ ວິທີການດັ່ງກ່າວລວມເຖິງ (ແຕ່ບໍ່ໄດ້ຈຳກັດພຽງເທົ່ານີ້):-

- ບໍ່ຂຽນ ຫຼືບັນທຶກລະຫັດສ່ວນຕົວລົງໃສ່ບັດ ຫຼືເກັບລະຫັດນັ້ນໄວ້ກັບບັດ.
- ບໍ່ຂຽນລະຫັດໃນຮູບແບບທີ່ເຮັດໃຫ້ຄົນອື່ນເຂົ້າໃຈໄດ້ງ່າຍ.
- ແຈ້ງທະນາຄານທັນທີທີ່ຮູ້ ຫຼືສົງໄສວ່າມີບຸກຄົນອື່ນຮູ້ລະຫັດສ່ວນຕົວ.
- ທຳລາຍເອກະສານແຈ້ງລະຫັດທັນທີທີ່ຜູ້ຖືບັດອ່ານແລ້ວແລະໄດ້ປ່ຽນລະຫັດສ່ວນຕົວເປັນທີ່ຮຽບຮ້ອຍແລ້ວ ທີ່ຕູ້ ATM ຂອງທະນາຄານ.

ສະມາຊິກຜູ້ຖືບັດຮັບຮູ້ແລະຍອມຮັບເຖິງການລະເລີຍບໍ່ປະຕິບັດຕາມຂໍ້ກຳນົດຂ້າງເທິງນັ້ນອາດເກີດຜົນເສຍຫາຍຈາກການຖືກລັກຫຼືການລະເມີດການໃຊ້ບັດເຊິ່ງທະນາຄານຈະບໍ່ຮັບຜິດຊອບຕໍ່ຄວາມເສຍຫາຍໃດໆ ທີ່ເກີດຂຶ້ນ. ສະມາຊິກຜູ້ຖືບັດຂໍຮັບຮອງຕໍ່ທະນາຄານວ່າ ທະນາຄານຈະບໍ່ຕ້ອງຮັບຜິດຊອບຕໍ່ຂໍ້ຮຽກຮ້ອງແລະ/ຫຼືໜີ້ສິນໃດໆ ບໍ່ວ່າຈາກໃຜທີ່ເກີດຈາກການນຳໃຊ້ບັດໂດຍບໍ່ໄດ້ຮັບອະນຸຍາດດັ່ງກ່າວ.

2.6 ສະມາຊິກຜູ້ຖືບັດມີໜ້າທີ່ຮັບຜິດຊອບຕໍ່ລະຫັດຜ່ານ(Password) ທີ່ທາງທະນາຄານອອກໃຫ້ແລະຈະຕ້ອງເກັບຮັກສາເປັນຢ່າງດີເພື່ອປ້ອງກັນບໍ່ໃຫ້ບຸກຄົນອື່ນຮູ້

## 3. ການໃຊ້ບັດ

3.1 ສະມາຊິກຜູ້ຖືບັດຫຼັກຈະຕ້ອງຮັບຜິດຊອບຕໍ່ ໜີ້ສິນແລະ/ຫຼືຂໍ້ຜູກພັນໃດໆ ທີ່ເກີດຈາກການໃຊ້ບັດທັງໝົດ ລວມທັງລາຍການໃຊ້ຂອງບັດເສີມໂດຍຄວາມຮັບຜິດຊອບດັ່ງກ່າວຈະຍັງຄົງມີຢູ່ຕໍ່ໄປເຖິງແມ່ນວ່າຈະຍົກເລີກສັນຍານີ້ແລ້ວ.

3.2 a) ໃນການຊື້ສິນຄ້າທີ່ຈ່າຍດ້ວຍບັດເຄຣດິດຈາກຮ້ານຄ້າຫຼືການເບີກຖອນເງິນສົດລ່ວງໜ້າຈາກທະນາຄານສະມາຊິກມາສເຕີ້ຄາດ/ວີຊ້າ, ສະມາຊິກຜູ້ຖືບັດຈະຕ້ອງເຊັນຊື່ຕົນເອງລົງໃນໃບຢັ້ງຢືນການຂາຍ (Sales Slip, EDC Slip) ຫຼືໃບຖອນເງິນສົດລ່ວງໜ້າທີ່ຮ້ານຄ້າ ຫຼືທະນາຄານຈັດກຽມໄວ້ໃຫ້ແລ້ວແຕ່ກໍລະນີ, ທາງທະນາຄານຈະຫັກບັນຊີສະມາຊິກຜູ້ຖືບັດຕາມຈຳນວນເງິນທີ່ປະກົດໃນເອກະສານດັ່ງກ່າວ.


Unit 01, Ban Phakhao, Kaysone Phomvihanh Road, Xaythany District, Vientiane Capital, Lao P.D.R.
Tel:(+856-21) 711 511-533, Fax:(+856-21) 711 500, Email:info@phongsavanhbank.com, www.phongsavanhbank.com

b) ເຖິງວ່າຈະໄດ້ລະບຸໄວ້ໃນຂໍ້3.2. (a)ໃນຂ້າງເທິງນີ້, ຜູ້ຖືບັດຍິນຍອມໃຫ້ທະນາຄານຫັກເງິນໃນບັນຊີຕາມມູນຄ່າຂອງຈຳນວນເງິນທີ່ໄດ້ລະບຸໄວ້ໃນ ໃບຢັ້ງຢືນການຂາຍ(Sales Slip, EDC Slip) ຫຼືໃບຖອນເງິນສົດລ່ວງໜ້າທີ່ຜູ້ຖືບັດບໍ່ໄດ້ລົງລາຍເຊັນ, ຖ້າຫາກທະນາຄານໄດ້ກວດສອບເອກະສານຫລັກຖານຈົນເປັນທີ່ພໍໃຈແລ້ວວ່າ ການທີ່ຜູ້ຖືບັດບໍ່ໄດ້ລົງລາຍເຊັນນັ້ນ ເປັນວິທີປະຕິບັດຕາມປົກກະຕິຂອງລາຍການຊື້ຂາຍສິນຄ້າ ແລະ /ຫຼືບໍລິການປະເພດນັ້ນ ຫຼືເກີດຂຶ້ນເນື່ອງຈາກຄວາມຜິດພາດ ຫຼືການລະເລີຍການປະຕິບັດໂດຍສະມາຊິກຜູ້ຖືບັດແລະ/ຫຼືຮ້ານຄ້າແລະ/ຫຼືທະນາຄານສະມາຊິກ.

c) ທະນາຄານຈະຖືເອົາເອກະສານລາຍການເຄື່ອນໄຫວທີ່ບັນທຶກຈາກການໃຊ້ບັດ, ລວມເຖິງ(ແຕ່ບໍ່ໄດ້ຈຳກັດພຽງເທົ່ານີ້) ລາຍການສັ່ງຊື້ທາງໄປສະນີຫຼືທາງໂທລະສັບ, ເປັນຫຼັກຖານແຫ່ງໜີ້ທີ່ເກີດຈາກການໃຊ້ບັດເຄຣດິດໃນການຫັກບັນຊີຂອງສະມາຊິກ ເຖິງແມ່ນວ່າເອກະສານທີ່ໃຊ້ໃນການບັນທຶກດັ່ງກ່າວຈະບໍ່ມີລາຍເຊັນຂອງສະມາຊິກບັດ.

3.3 ທະນາຄານຈະໃຊ້ດຸນພິນິດຕາມທີ່ເຫັນສົມຄວນຈາລະນາກຳນົດວົງເງິນຄ່າໃຊ້ຈ່າຍຂອງບັນຊີບັດ ເຊິ່ງສະມາຊິກຜູ້ຖືບັດຈະຕ້ອງເບິ່ງແຍງການໃຊ້ວົງເງິນດັ່ງກ່າວຢ່າງເຄັ່ງຄັດ.

3.4 ຫາກສະມາຊິກຜູ້ຖືບັດມີບັນຊີບັດຕັ້ງແຕ່2ບັນຊີຂຶ້ນໄປທະນາຄານຈະກຳນົດວົງເງິນຄ່າໃຊ້ຈ່າຍໃນບັດເປັນວົງເງິນລວມທັງຂອງບັດຫຼັກ ແລະບັດເສີມ (ຖ້າມີ).

3.5 ເຖິງແມ່ນຈະມີກຳນົດວົງເງິນສຳລັບສະມາຊິກຜູ້ຖືບັດໄວ້ແລ້ວກໍ່ຕາມ ແຕ່ທະນາຄານສາມາດໃຊ້ດຸນພິນິດຕາມທີ່ເຫັນສົມຄວນປ່ຽນແປງວົງເງິນດັ່ງກ່າວ ຫຼືຈຳກັດ ຫຼືປະຕິເສດ ຫຼືລະງັບການໃຊ້ບັດໄດ້ທຸກເມື່ອໂດຍບໍ່ຈຳເປັນທີ່ຈະແຈ້ງໃຫ້ສະມາຊິກຜູ້ຖືບັດຮູ້ລ່ວງໜ້າ ຫຼືໃຫ້ເຫດຜົນໃນການປ່ຽນແປງວົງເງິນ , ການປະຕິເສດ ຫຼືລະງັບວົງເງິນການໃຊ້ບັດດັ່ງກ່າວ.

3.6 ທະນາຄານຈະບໍ່ຮັບຜິດຊອບໃດ ໆຕໍ່ກັບການກະທຳຫຼືການລະເລີຍບໍ່ກະທຳການໃດໆຂອງຮ້ານຄ້າ ລວມເຖິງການປະຕິເສດການຮັບບັດຂອງຮ້ານຄ້າຫຼືບັນຫາເລື່ອງຄວາມບົກຜ່ອງຫຼືການຂາດຈຳນວນ ຫຼືຄວາມບໍ່ພຽງພໍຂອງສິນຄ້າ/ບໍລິການ ຂອງຮ້ານຄ້າ, ສະມາຊິກຜູ້ຖືບັດຈະຕ້ອງດຳເນີນການເພື່ອແກ້ໄຂບັນຫາທີ່ເກີດຂຶ້ນດັ່ງກ່າວກັບຮ້ານຄ້າໂດຍກົງ, ໂດຍບໍ່ພົວພັນຜ່ານທາງທະນາຄານແລະສະມາຊິກຜູ້ຖືບັດຮັບຮອງວ່າຈະບໍ່ໃຫ້ທະນາຄານຕ້ອງມາກ່ຽວຂ້ອງກັບການຮຽກຮ້ອງ ຫຼືຂໍ້ຜິດພາດ ຫຼືການດຳເນີນການທາງກົດໝາຍດັ່ງກ່າວຕໍ່ກັບຮ້ານຄ້າ, ຂໍ້ຮຽກຮ້ອງ ຫຼືຂໍ້ຜິດພາດທີ່ຜູ້ຖືບັດດຳເນີນການຕໍ່ຮ້ານຄ້າ ແມ່ນບໍ່ເປັນເຫດຜົນທີ່ສະມາຊິກຜູ້ຖືບັດຈະໃຊ້ເປັນຂໍ້ຍົກເວັ້ນການຊຳລະເງິນໃຫ້ແກ່ທະນາຄານຕາມຈຳນວນລາຍການທີ່ໃຊ້ໃນບັດ.

3.7 ສະມາຊິກຜູ້ຖືບັດສາມາດນຳໃຊ້ບັດໃນການເບີກຖອນເງິນສົດຜ່ານຕູ້ເອທີເອັມ(ATM) ໂດຍການນຳໃຊ້ບັດດັ່ງກ່າວແມ່ນຂຶ້ນກັບຂໍ້ກຳນົດແລະເງື່ອນໄຂ ກ່ຽວກັບການຖອນເງິນສົດຜ່ານຕູ້ເອທີເອັມ (ATM) ຂອງທະນາຄານຜູ້ອອກບັດ ແລະ/ຫຼືຂອງທະນາຄານສະມາຊິກເຈົ້າຂອງຕູ້ເອທີເອັມ (ATM) ນອກເໜືອຈາກຂໍ້ກຳນົດ ແລະເງື່ອນໄຂໃນຂໍ້ຕົກລົງສະບັບນີ້.

3.8 ສະມາຊິກຜູ້ຖືບັດຕົກລົງຍິນຍອມໃນກໍລະນີສະມາຊິກຜູ້ຖືບັດໃຊ້ບໍລິການອື່ນໆຂອງທະນາຄານ ແລະທະນາຄານພິຈາລະນາເຫັນວ່າການໃຊ້ບໍລິການອື່ນໆ ດັ່ງກ່າວນັ້ນແມ່ນດຳເນີນການໃນລັກສະນະທີ່ທະນາຄານບໍ່ພຶງປະສົງ ທະນາຄານມີສິດລະງັບການໃຊ້ຊົ່ວຄາວ ຫຼືຍົກເລີກບັດ ຫຼືເກັບບັດຄືນໂດຍບໍ່ຕ້ອງແຈ້ງໃຫ້ສະມາຊິກຜູ້ຖືບັດຮູ້ລ່ວງໜ້າຫຼືບໍ່ຕ້ອງຊີ້ແຈງເຫດຜົນໃດໆ.

3.9 ສະມາຊິກຜູ້ຖືບັດຕ້ອງບໍ່ໃຊ້ບັດໃນທາງຜິດກົດໝາຍເຊັ່ນ: ການຊື້ສິນຄ້າ ຫຼືບໍລິການທີ່ເກືອດຫ້າມຕາມກົດໝາຍຂອງສ.ປ.ປ.ລາວ, ລວມເຖິງ, ແຕ່ບໍ່ໄດ້ຈ□າກັດພຽງເທົ່ານີ້, ການນຳໃຊ້ສຳຫຼັບການພະນັນທາງສື່ອີເລັກໂທຣນິກທີ່ຜິດກົດໝາຍ, ທະນາຄານມີສິດຍົກເລີກໃຫ້ຜູ້ຖືບັດເຊົາໃຊ້ທັນທີໂດຍບໍ່ຕ້ອງແຈ້ງໃຫ້ຜູ້ຖືບັດຮູ້ລ່ວງໜ້າ ຫຼືຮັບຜິດຊອບຕໍ່ໜີ້ສິນທີ່ຜູ້ຖືບັດໄດ້ກະທຳໄວ້, ຖ້າຫາກທະນາຄານພົບວ່າບັດດັ່ງກ່າວຖືກໃຊ້ໃນທາງທີ່ຜິດກົດໝາຍ.

## 4 ບັດເສີມ

4.1 ທະນາຄານອາດພິຈາລະນາໂດຍໃຊ້ດຸນພິນິດຕາມທີ່ເຫັນສົມຄວນຂອງທະນາຄານແຕ່ພຽງຝ່າຍດຽວ ໃນການອອກບັດເສີມຕາມຄຳຂໍຂອງຜູ້ຖືບັດຫຼັກ.

4.2 ທະນາຄານອາດຈະຮຽກຮ້ອງການຊຳລະໜີ້ຄົງຄ້າງໃນບັນຊີບັດເອົາຈາກຜູ້ຖືບັດຫຼັກ ຫຼືຈາກຜູ້ຖືບັດບັດເສີມຝ່າຍໃດຝ່າຍໜຶ່ງກໍ່ໄດ້ ໂດຍບໍ່ຖືເປັນການຍົກເລີກສິດທິໃນການຮຽກຮ້ອງກັບອີກຝ່າຍໜຶ່ງ.

4.3 ການຍົກເລີກບັດເສີມສະມາຊິກຜູ້ຖືບັດຫຼັກ ຈະຕ້ອງແຈ້ງເປັນລາຍລັກອັກສອນຕໍ່ທະນາຄານ ແລະການຍົກເລີກບັດດັ່ງກ່າວຈະຕ້ອງບໍ່ກະທົບຕໍ່ສິດ, ໜ້າທີ່ ແລະພາລະຜູກພັນໃດໆ ທັງຂອງສະມາຊິກຜູ້ຖືບັດຫຼັກ ແລະ/ຫຼືສະມາຊິກຜູ້ຖືບັດເສີມທີ່ເກີດຂຶ້ນກ່ອນການຍົກເລີກດັ່ງກ່າວ ແລະສະມາຊິກບັດເສີມຈະຕ້ອງຕັດບັດອອກເປັນສອງສ່ວນແລະສົ່ງໃຫ້ແກ່ທະນາຄານພ້ອມໜັງສືແຈ້ງຍົກເລີກ.

4.4 ສະມາຊິກບັດເສີມຈະຕ້ອງຮັບຜິດຊອບຕໍ່ໜີ້ສິນ ແລະພາລະຜູກພັນໃດໆ ສະເພາະສ່ວນທີ່ເກີດຈາກການໃຊ້ບັດເສີມເທົ່ານັ້ນ ແລະຄວາມຮັບຜິດຊອບ ດັ່ງກ່າວຈະຍັງຄົງມີຢູ່ ເຖິງແມ່ນວ່າສັນຍາຈະສິ້ນສຸດລົງແລ້ວກໍ່ຕາມ.



Unit 01, Ban Phakhao, Kaysone Phomvihanh Road, Xaythany District, Vientiane Capital, Lao P.D.R.
Tel:(+856-21) 711 511-533, Fax:(+856-21) 711 500, Email:info@phongsavanhbank.com, www.phongsavanhbank.com

4.5 ສະມາຊິກຜູ້ຖືບັດຫຼັກຈະຕ້ອງເບິ່ງແຍງໃຫ້ສະມາຊິກຜູ້ຖືບັດເສີມຮັບຮູ້ ແລະປະຕິບັດຕາມຂໍ້ກຳນົດ ແລະເງື່ອນໄຂໃນຂໍ້ຕົກລົງສະບັບນີ້.

**5 ລາຍການເຄື່ອນໄຫວຢູ່ຕ່າງປະເທດ**

5.1 ສະມາຊິກຜູ້ຖືບັດສາມາດໃຊ້ບັດເຄຣດິດຢູ່ຕ່າງປະເທດທັງກັບຮ້ານຄ້າສະມາຊິກ, ທະນາຄານສະມາຊິກ ແລະຕູ້ເອທີເອັມຂອງວີຊ້າ/ມາສເຕີ້ຄາດ.

5.2 ລາຍການຕ່າງໆທີ່ສະມາຊິກຜູ້ຖືບັດເຮັດລາຍການຢູ່ຕ່າງປະເທດຕ້ອງອີງຕາມກົດໝາຍຂອງປະເທດນັ້ນໆ.

5.3 ລາຍການທີ່ເກີດຂຶ້ນຢູ່ຕ່າງປະເທດທະນາຄານຈະຄິດຄ່າບໍລິການກັບສະມາຊິກໃນສະກຸນເງິນຂອງປະເທດ ທີ່ສະມາຊິກຜູ້ຖືບັດເຮັດລາຍການ ແລະຄ່າບໍລິການດັ່ງກ່າວຈະຖືກປ່ຽນມາເປັນເງິນກີບລາວ ຕາມອັດຕາແລກປ່ຽນທີ່ທາງທະນາຄານ ແລະ/ຫຼືວີຊ້າ/ມາສເຕີ້ຄາດໄດ້ພິຈາລະນາກຳນົດໃຫ້ໂດຍ ໃຊ້ດຸນພິນິດຕາມທີ່ເຫັນສົມຄວນແຕ່ພຽງຝ່າຍດຽວ.

5.4 ໃນທຸກໂອກາດທີ່ເປັນໄປໄດ້, ສະມາຊິກຜູ້ຖືບັດຈະຕ້ອງປະຕິບັດຕາມລະບຽບການແລກປ່ຽນເງິນຕາຕ່າງປະເທດທີ່ອອກໂດຍທະນາຄານແຫ່ງ ສ.ປ.ປ.ລາວ ໃນສ່ວນທີ່ກ່ຽວຂ້ອງກັບການເຮັດລາຍການຢູ່ຕ່າງປະເທດ ແລະ ສະມາຊິກຜູ້ຖືບັດຈະຕ້ອງຮັບຜິດຊອບແຕ່ພຽງຜູ້ດຽວຕໍ່ກັບການລະເມີດລະບຽບດັ່ງກ່າວ.

**6 ບັນຊີທີ່ໃຊ້ກັບບັດ**

6.1 ທະນາຄານຈະເປີດບັນຊີສຳລັບສະມາຊິກຜູ້ຖືບັດຫຼັກ ແລະສະມາຊິກຜູ້ຖືບັດເສີມ ໂດຍລາຍການການໃຊ້ບັດ ແລະຄ່າທຳນຽມ ຄ່າບໍລິການ ແລະຄ່າໃຊ້ຈ່າຍຕ່າງໆ ທັງໝົດຈະຖືກຫັກເຂົ້າໃນບັນຊີບັດດັ່ງກ່າວ.

6.2 ທະນາຄານຈະສົ່ງໃບສະຫຼຸບຖານະທາງການເງິນຂອງບັນຊີບັດທັງໝົດຂອງສະມາຊິກຜູ້ຖືບັດຫຼັກ ແລະສະມາຊິກຜູ້ຖືບັດເສີມໄປຍັງສະມາຊິກຜູ້ຖືບັດ ເປັນລາຍເດືອນ ຫຼືເປັນຊ່ວງໄລຍະເວລາຕາມທີ່ທະນາຄານພິຈາລະນາເຫັນວ່າເໝາະສົມ ໃນວັນທີ່ກຳນົດຂຶ້ນໂດຍທະນາຄານ ເຊິ່ງວັນທີ່ດັ່ງກ່າວຕໍ່ຈາກນີ້ໄປຈະເອີ້ນວ່າ 'ວັນທີໃບສະຫຼຸບຖານະທາງການເງິນ'

6.3 ລາຍການບັນທຶກໃນໃບສະຫຼຸບຖານະທາງການເງິນຈະຖືວ່າຖືກຕ້ອງແລະຜູກພັນກັບສະມາຊິກຜູ້ຖືບັດ ເວັ້ນແຕ່ສະມາຊິກຜູ້ຖືບັດຈະແຈ້ງເຖິງຄວາມຜິດພາດນັ້ນ (ຖ້າມີ) ໃຫ້ກັບທະນາຄານຢ່າງເປັນລາຍລັກອັກສອນບໍ່ໃຫ້ກາຍ 14 ວັນ ນັບຈາກວັນທີໃນໃບສະຫຼຸບຖານະທາງການເງິນທີ່ທະນາຄານອອກໃຫ້ພ້ອມທັງຄຳຮ້ອງຮຽນມາ ຖ້າຂໍ້ຜິດພາດໃດໆທີ່ໄດ້ຮັບຫຼັງຈາກໄລຍະເວລາດັ່ງກ່າວແມ່ນຈະບໍ່ໄດ້ຮັບການຕອບສະໜອງໃດ ໆ.

6.4 ສະມາຊິກຜູ້ຖືບັດຕ້ອງແຈ້ງໃຫ້ທາງທະນາຄານຮັບຮູ້ເປັນລາຍລັກອັກສອນທັນທີ ໃນກໍລະນີມີການປ່ຽນແປງຂໍ້ມູນຂອງຜູ້ຖືບັດຫຼັກຫຼືບັດເສີມກ່ຽວກັບທີ່ຢູ່, ເບີໂທ, ຫຼືບ່ອນເຮັດວຽກຈາກທີ່ໄດ້ແຈ້ງໄວ້ໃນໃບສະໝັກການເປັນສະມາຊິກ. ສະມາຊິກບັດຈະຕ້ອງແຈ້ງມາຍັງທະນາຄານໃນກໍລະນີທີ່ມີແຜນການຈະໄປຕ່າງປະເທດຫຼາຍກວ່າ 30 ວັນ.

**7 ການຊຳລະສະສາງ**

7.1 ສະມາຊິກຜູ້ຖືບັດຈະຕ້ອງຊຳລະຍອດຄົງຄ້າງໃນບັນຊີບັດຕາມຈຳນວນເງິນຂັ້ນຕ່ຳທີ່ຄົບກຳນົດຊຳລະຫຼືຕາມຈຳນວນຍອດຄົງຄ້າງທັງໝົດຕົວຈິງທີ່ຄົບກຳນົດຊຳລະໃນວັນທີ ຫຼືກ່ອນວັນທີຄົບກຳນົດທີ່ໄດ້ລະບຸໄວ້ໃນໃບສະຫຼຸບຖານະທາງການເງິນ,ຈຳນວນເງິນຂັ້ນຕ່ຳທີ່ຕ້ອງຊຳລະແມ່ນຈຳນວນ :-

a) 10% ຂອງຍອດຄ້າງຊຳລະໃນບັນຊີບັດຂອງແຕ່ລະບັນຊີ ແຕ່ຕ້ອງບໍ່ຕ່ຳກວ່າ 250,000(ກີບ)

b) ຍອດຄ້າງຊຳລະສ່ວນທີ່ເກີນວົງເງິນບັດ ບວກ 10% ຂອງຍອດຄົງຄ້າງໃນບັນຊີບັດ, ລວມທັງຍອດຄົບກຳນົດຂອງງວດທີ່ຜ່ານມາທີ່ຄ້າງຊຳລະ ກໍລະນີຍອດຄ້າງຊຳລະໃນບັນຊີບັດຂອງງວດທີ່ຜ່ານມາເກີນວົງເງິນບັດ.

7.2 ກໍລະນີບໍ່ຊຳລະເງິນຕາມຂໍ້ກຳນົດທີ 7.1(a) ຂ້າງເທິງ ທາງທະນາຄານມີສິດໃນການເກັບຄ່າໃຊ້ຈ່າຍຈາກສະມາຊິກຜູ້ຖືບັດ ແລະສະມາຊິກຜູ້ຖືບັດຈະຕ້ອງຮັບຜິດຊອບໃນການຊຳລະຄ່າໃຊ້ຈ່າຍດັ່ງກ່າວ ຕາມທີ່ໄດ້ລະບຸໄວ້ໃນຂໍ້ກຳນົດທີ 11 ຂອງຂໍ້ຕົກລົງນີ້

7.3 ການຊຳລະເງິນຕາມບັນຊີບັດ ຈະຕ້ອງຊຳລະຕາມສະກຸນເງິນທີ່ລະບຸໃນໃບສະຫຼຸບຖານະທາງການເງິນ,ການຊຳລະເງິນໂດຍສະມາຊິກຜູ້ຖືບັດຈະຖືວ່າມີຜົນກໍ່ຕໍ່ເມື່ອທະນາຄານໄດ້ຮັບເງິນຕາມການຊຳລະນັ້ນຢ່າງຄົບຖ້ວນແລະສົມບູນການຊຳລະເງິນດ້ວຍແຊັກທີ່ຕ້ອງດຳເນີນການໂດຍມີຄ່າໃຊ້ຈ່າຍຈຳນວນເງິນທີ່ຊຳລະຈະຕ້ອງລວມຄ່າໃຊ້ຈ່າຍນັ້ນໆ ໄວ້ດ້ວຍ ບໍ່ດັ່ງນັ້ນທະນາຄານຈະຫັກບັນຊີສະມາຊິກຜູ້ຖືບັດຕາມຈຳນວນຄ່າໃຊ້ຈ່າຍທີ່ເກີດຂຶ້ນ.


Unit 01, Ban Phakhao, Kaysone Phomvihanh Road, Xaythany District, Vientiane Capital, Lao P.D.R.
Tel:(+856-21) 711 511-533, Fax:(+856-21) 711 500, Email:info@phongsavanhbank.com, www.phongsavanhbank.com

7.4 ໃນການນຳເງິນທີ່ສະມາຊິກຜູ້ຖືບັດຈ່າຍເພື່ອຊຳລະລາຍການທີ່ຄົງຄ້າງໃນບັນຊີບັດ ລຳດັບຂອງການຊຳລະຍອດຄົງຄ້າງແຕ່ລະລາຍການຈະເປັນໄປຕາມທີ່ທະນາຄານແຕ່ພຽງຜູ້ດຽວຈະເຫັນເໝາະສົມ.

## 8 ເຈົ້າຂອງບັດ

8.1 ທະນາຄານມີສິດຮຽກຄືນບັດ ແລະ/ຫຼືຍົກເລີກການໃຫ້ບໍລິການໃດໆ ໂດຍບໍ່ຕ້ອງແຈ້ງໃຫ້ສະມາຊິກຜູ້ຖືບັດຮູ້, ໃນເວລາ ຫຼືໃນໂອກາດທີ່ທະນາຄານພິຈາລະນາວ່າເໝາະສົມທີ່ຈະລະງັບການນຳໃຊ້ບັດຂອງສະມາຊິກຜູ້ຖືບັດ.

8.2 ບັດແມ່ນຊັບສິນຂອງທະນາຄານສະມາຊິກຜູ້ຖືບັດຕ້ອງຕັດບັດອອກເປັນສອງສ່ວນແລະສົ່ງຄືນທະນາຄານໃນກໍລະນີມີການຍົກເລີກ ຫຼືລະງັບການນຳໃຊ້.

## 9 ບັດເສຍ/ບັດຖືກລັກ

9.1 ສະມາຊິກຜູ້ຖືບັດຈະຕ້ອງໃຊ້ຄວາມລະມັດລະວັງຕາມສົມຄວນໃນການເກັບຮັກສາບັດເພື່ອປ້ອງກັນການສູນຫາຍ ຫຼືຖືກລັກ ໃນກໍລະນີບັດເສຍ/ບັດຖືກລັກຫຼືບຸກຄົນທີ່ບໍ່ໄດ້ຮັບອານຸຍາດລ່ວງຮູ້ລະຫັດສ່ວນຕົວ(PIN)ສະມາຊິກຜູ້ຖືບັດຈະຕ້ອງແຈ້ງໃຫ້ພະແນກບໍລິການບັດຂອງທະນາຄານ (ສູນບັດເຄຣດິດ) ຮູ້ທັນທີໂດຍທາງໂທລະສັບ ຫຼືແຟັກ ແລະຢັ້ງຢືນເປັນລາຍລັກອັກສອນໄປຍັງສູນບັດເຄຣດິດ ຂອງທະນາຄານໃຫ້ໄວທີ່ສຸດເທົ່າທີ່ຈະໄວໄດ້. ນອກຈາກນີ້ສະມາຊິກຜູ້ຖືບັດຄວນແຈ້ງຄວາມຕໍ່ເຈົ້າໜ້າທີ່ຕຳຫຼວດໃນກໍລະນີບັດເສຍ ຫຼືຖືກລັກ ແລະສົ່ງສຳເນົາບັນທຶກແຈ້ງຄວາມໃຫ້ກັບສູນບັດເຄຣດິດຂອງທະນາຄານ.

9.2 ສະມາຊິກຜູ້ຖືບັດ ຕ້ອງຮັບຜິດຊອບຕໍ່ລາຍການໃຊ້ບັດໂດຍບໍ່ໄດ້ຮັບອະນຸຍາດທັງໝົດ ທີ່ເກີດຂຶ້ນກ່ອນທີ່ສູນບັດເຄຣດິດຂອງທະນາຄານຈະໄດ້ຮັບແຈ້ງກ່ຽວກັບບັດເສຍ/ບັດຖືກລັກດັ່ງກ່າວ.

9.3 ສະມາຊິກຜູ້ຖືບັດ ຍັງຄົງຕ້ອງຮັບຜິດຊອບຕໍ່ລາຍການໃຊ້ບັດໂດຍບໍ່ໄດ້ຮັບອະນຸຍາດ ໃນກໍລະນີທີ່ການສອບສວນໂດຍທາງທະນາຄານແລະ/ຫຼືເຈົ້າໜ້າທີ່ຕຳຫຼວດໄດ້ພົບວ່າສະມາຊິກຜູ້ຖືບັດມີສ່ວນກ່ຽວຂ້ອງໃນການຊື້ ຫຼືໃຊ້ບໍລິການຈາກຮ້ານຄ້າທີ່ຮັບທຳລາຍການນັ້ນໃຫ້ກັບຜູ້ທີ່ບໍ່ໄດ້ຮັບອະນຸຍາດໂດຍໃຊ້ບັດຂອງສະມາຊິກຜູ້ຖືບັດ, ສະມາຊິກຜູ້ຖືບັດຈະຕ້ອງຮັບຜິດຊອບ ຕໍ່ກັບບັນດາລາຍການໃຊ້ບັດທີ່ບໍ່ໄດ້ຮັບອະນຸຍາດທີ່ເກີດຂຶ້ນກ່ອນໜ້າທີ່ທາງເຈົ້າໜ້າທີ່ສູນບັດເຄຣດິດຂອງທະນາຄານຈະໄດ້ຮັບການແຈ້ງກ່ຽວກັບບັດເສຍ/ບັດຖືກລັກ ຈາກສະມາຊິກຜູ້ຖືບັດຢ່າງເປັນລາຍລັກອັກສອນ.

9.4 ທະນາຄານບໍ່ມີຂໍ້ຜູກມັດໃດໆ ໃນການທີ່ຈະຕ້ອງອອກບັດທົດແທນໃຫ້ແກ່ບັດເສຍຫຼືບັດຖືກລັກ.

## 10 ການລະງັບ/ການຍົກເລີກ/ການຢຸດຕິ

10.1 ທະນາຄານມີສິດຢ່າງສົມບູນໃນການຕັດສິນໃຈໂດຍບໍ່ມີພາລະຜູກພັນຕໍ່ກັບສະມາຊິກຜູ້ຖືບັດໃນການຍົກເລີກ ຫຼືເພີກຖອນການນຳໃຊ້ບັດຂອງສະມາຊິກຜູ້ຖືບັດຫຼັກ ຫຼືຂອງສະມາຊິກຜູ້ຖືບັດເສີມໂດຍບໍ່ຕ້ອງແຈ້ງຫຼືຊີ້ແຈງເຫດຜົນໃດໆ ໃຫ້ສະມາຊິກຜູ້ຖືບັດຮູ້. ການຍົກເລີກຫຼືເພີກຖອນການນຳໃຊ້ບັດຂອງສະມາຊິກຜູ້ຖືບັດຫຼັກແມ່ນລວມເຖິງການຍົກເລີກຫຼືເພີກຖອນການນຳໃຊ້ບັດຂອງສະມາຊິກຜູ້ຖືບັດເສີມ ແລະໃນທຳນອງກັບກັນດ້ວຍ.

10.2ຫລັງຈາກທີ່ມີການຍົກເລີກ ຫຼືເພີກຖອນການນຳໃຊ້ບັດຂອງສະມາຊິກຜູ້ຖືບັດຍອດເງິນຄົງເຫຼືອໃນບັນຊີບັດທີ່ມີຈຳນວນຕ່ຳກ່ວາ 15,000ກີບ ຈະຖືກຕັດບັນຊີເປັນຄ່າທຳນຽມການບໍລິການໂດຍທະນາຄານພົງສະຫວັນ.

10.3ນອກຈາກກໍລະນີທີ່ກ່າວມາແລ້ວໃນຂໍ້ 10.1 ຂ້າງເທິງຈ□ານວນເງິນທັງໝົດທີ່ສະມາຊິກຜູ້ຖືບັດຄ້າງຊ□າລະກັບທະນາຄານໃນບັນຊີບັດຈະຖືເປັນໜີ້ທີ່ຄົບກ□ານົດຊຳລະທັນທີ ຫາກມີກໍລະນີດັ່ງຕໍ່ໄປນີ້ເກີດຂຶ້ນ:

a) ສະມາຊິກຜູ້ຖືບັດ ຜິດນັດຊຳລະຍອດຄົງຄ້າງທີ່ຄົບກຳນົດງວດໃດງວດໜຶ່ງ, ຫຼື

b) ສະມາຊິກຜູ້ຖືບັດກາຍເປັນບຸກຄົນລົ້ມລະລາຍ, ໜີ້ສິນລົ້ນພົ້ນຕົວຫຼືຕາຍຫຼືກາຍເປັນບຸກຄົນເສຍສະຕິ, ຫຼື

c) ຊັບສິນສ່ວນບຸກຄົນຂອງສະມາຊິກຜູ້ຖືບັດຕົກຢູ່ພາຍໃຕ້ການບັງຄັບພາສີຫຼືເປັນພາລະທາງກົດໝາຍອື່ນໆຫຼື

d) ພາຍຫຼັງການກວດສອບຄວາມໝັ້ນຄົງທາງການເງິນຂອງສະມາຊິກຜູ້ຖືບັດ, ທະນາຄານເຫັນວ່າສະມາຊິກຜູ້ຖືບັດມີຖານະບໍ່ໝັ້ນຄົງພຽງພໍ(ເຖິງແມ່ນວ່າບັນຊີບັດຂອງສະມາຊິກຈະມີລັກສະນະປົກກະຕິກໍ່ຕາມ) ຫຼື


Unit 01, Ban Phakhao, Kaysone Phomvihanh Road, Xaythany District, Vientiane Capital, Lao P.D.R.
Tel:(+856-21) 711 511-533, Fax:(+856-21) 711 500, Email:info@phongsavanhbank.com, www.phongsavanhbank.com

e) ສະມາຊິກບັດໃຊ້ບັດເກີນວົງເງິນທີ່ທະນາຄານກຳນົດ ຫຼື

f) ສະມາຊິກບັດ ບໍ່ປະຕິບັດຕາມຂໍ້ກຳນົດທີ່ມີຢູ່ໃນຂໍ້ຕົກລົງສະບັບນີ້ຫຼື

g) ທະນາຄານບໍ່ຮູ້ທີ່ຢູ່ຂອງສະມາຊິກບັດຫຼື

h) ສະມາຊິກບັດໄດ້ຮຽກຮ້ອງ ຫຼືພະຍາຍາມຮຽກຮ້ອງໃຫ້ມີການໄກ່ເກ່ຍປະນອມໜີ້ກັບເຈົ້າໜີ້

10.4 ເມື່ອສະມາຊິກຜູ້ຖືບັດ ຊຳລະເງິນທີ່ຄົງຄ້າງທັງໝົດໃນບັນຊີບັດຮຽບຮ້ອຍແລ້ວ ສະມາຊິກຜູ້ຖືບັດສາມາດຍົກເລີກຂໍ້ຕົກລົງນີ້ໄດ້ ດ້ວຍການສົ່ງບັດຫຼັກແລະບັດເສີມທີ່ໄດ້ຖືກຕັດເຄິ່ງແລ້ວ ຄືນໃຫ້ແກ່ສູນບັດເຄຣດິດຂອງທະນາຄານ, ສະມາຊິກບັດຫຼັກແລະບັດເສີມຍັງຄົງຕ້ອງຮັບຜິດຊອບຕໍ່ບັດຈົນກວ່າທະນາຄານຈະໄດ້ຮັບບັດຄືນ ໃນການຍົກເລີກຂໍ້ຕົກລົງຕາມວິທີທີ່ກ່າວຂ້າງເທິງນີ້ບໍ່ໄດ້ເປັນການຍົກເລີກພາລະໜີ້ຄົງຄ້າງຂອງສະມາຊິກຜູ້ຖືບັດທີ່ມີກັບທະນາຄານທີ່ມີຢູ່ກ່ອນວັນທີ່ຍົກເລີກຂໍ້ຕົກລົງ.

10.5 ເມື່ອມີການຍົກເລີກ ຫຼືລະງັບການໃຊ້ບັດຂອງສະມາຊິກຜູ້ຖືບັດຫຼັກ ຫຼືສະມາຊິກຜູ້ຖືບັດເສີມ, ພາລະໜີ້ທີ່ຄົງຄ້າງໃນບັນຊີບັດຂອງສະມາຊິກຜູ້ຖືບັດຫຼັກ ແລະສະມາຊິກຜູ້ຖືບັດເສີມຈະກາຍເປັນໜີ້ທີ່ຄົບກຳນົດຊຳລະທັນທີ ແລະສະມາຊິກຜູ້ຖືບັດຈະຕ້ອງຊຳລະໜີ້ຄົງຄ້າງຫຼືຂຶ້ນກັບການຮຽກຮ້ອງຂອງທະນາຄານ ຫຼືອາດຈະດຳເນີນການໃນທາງທີ່ເໝາະສົມແຕ່ພຽງຝ່າຍດຽວ ຫຼືຕາມຄວາມເຫັນດີຂອງທັງສອງຝ່າຍ ຫຼືອາດຈະເລືອກເອົາຢ່າງໃດຢ່າງໜຶ່ງກໍ່ໄດ້.

10.6 ຜູ້ຖືບັດຫຼັກແລະບັດເສີມເຫັນດີແລະຍອມຮັບວ່າໃນກໍລະນີບັດຂອງພວກເຂົາຖືກຍົກເລີກ, ທະນາຄານມີສິດທີ່ຈະບັນທຶກເລກບັນຊີບັດໃນບັນຊີແຈ້ງຍົກເລີກ.

## 11 ຄ່າທຳນຽມ

11.1 ສະມາຊິກບັດຍິນຍອມ ແລະຕົກລົງໃຫ້ທະນາຄານຫັກເງິນຈາກບັນຊີບັດສ□າລັບຄ່າທ□ານຽມແລະຄ່າໃຊ້ຈ່າຍຕ່າງໆດັ່ງຕໍ່ໄປນີ້:

a) ຄ່າທຳນຽມລາຍປີຕາມທີ່ກຳນົດໂດຍທະນາຄານໃນການອອກບັດຫຼັກ ແລະບັດເສີມຫຼືການຕໍ່ອາຍຸບັດທີ່ຄົບກຳນົດ ເຊິ່ງຄ່າທຳນຽມດັ່ງກ່າວອາດມີການປ່ຽນແປງຂຶ້ນກັບການພິຈາລະນາຂອງທະນາຄານ. ຄ່າທຳນຽມລາຍປີບໍ່ສາມາດສົ່ງຄືນໄດ້.

b) ເມື່ອສິ້ນສຸດການໃຊ້ບັນຊີບັດ(ໂດຍສະມາຊິກຜູ້ຖືບັດຫຼືໂດຍທະນາຄານ) ໂດຍທີ່ບໍ່ໄດ້ຊຳລະໜີ້ຄົງຄ້າງໃນບັນຊີບັດທັງໝົດ, ທະນາຄານຂໍສະຫງວນສິດໃນການສືບຕໍ່ເກັບຄ່າທຳນຽມລາຍປີຕໍ່ໄປຈົນກ່ວາບັນຊີບັດຂອງສະມາຊິກຜູ້ຖືບັດນັ້ນຈະໄດ້ຮັບການຊຳລະຍອດທີ່ຍັງຄົງຄ້າງຈົນຄົບຖ້ວນແລ້ວ.

c) ອັດຕາຄ່າທຳນຽມການເບີກຖອນເງິນສົດລ່ວງໜ້າທີ່ທະນາຄານກຳນົດແມ່ນຄິດໄລ່ຕາມອັດຕາສ່ວນຂອງຈຳນວນເງິນທີ່ຖອນຫຼືຕ່ຳສຸດ 50,000 ກີບ. ຄ່າທຳນຽມການເບີກຖອນເງິນສົດລ່ວງໜ້າແມ່ນຈະຖືກບັນທຶກບັນຊີເປັນຄ່າໃຊ້ຈ່າຍໃນບັນຊີບັດ. ນອກເໜືອຈາກຄ່າທຳນຽມຂອງການຖອນເງິນສົດລ່ວງໜ້າແລ້ວ, ຍັງໄດ້ຄິດໄລ່ດອກເບ້ຍໃນອັດຕາ 1.5% ຕໍ່ເດືອນ ໂດຍຄຳນວນເປັນລາຍວັນຈາກຈຳນວນເງິນສົດທີ່ຖອນລ່ວງໜ້າ ເລີ່ມຈາກມື້ທີ່ຖອນເງິນສົດລ່ວງໜ້າແລະຈາກຄ່າທຳນຽມການເບີກຖອນເງິນສົດລ່ວງໜ້າເລີ່ມຈາກວັນທີ່ບັນທຶກບັນຊີເປັນຄ່າໃຊ້ຈ່າຍໃນບັນຊີບັດ, ຈົນເຖິງມື້ທີ່ມີການຊຳລະຄົບຖ້ວນ. ເງິນສົດ ຫຼືຊິບຫຼິ້ນການພະນັນ(gambling chip) ຫຼືເອກະສານແລະວັດສະດຸໃດໆ ທີ່ໃຊ້ແທນເງິນສົດທີ່ໄດ້ຈາກຄາສິໂນໂດຍໃຊ້ບັດຂອງທະນາຄານແມ່ນລວມຢູ່ໃນຮູບແບບດຽວກັນກັບການຖອນເງິນສົດລ່ວງໜ້າ.

d) ຄ່າທຳນຽມຂອງການບໍລິການພິເສດອື່ນໆທີ່ໂດຍປົກກະຕິແລ້ວບໍ່ໄດ້ເປັນບໍລິການມາດຕະຖານທີ່ໃຫ້ກັບສະມາຊິກຜູ້ຖືບັດ ສະມາຊິກຜູ້ຖືບັດສາມາດເລືອກໃຊ້ບໍລິການດັ່ງກ່າວໄດ້ໂດຍການສະໝັກຂໍໃຊ້ບໍລິການ, ຄ່າທຳນຽມຂອງການບໍລິການພິເສດທີ່ສະມາຊິກບັດຂໍໃຊ້ບໍລິການດັ່ງກ່າວ ແມ່ນແຕກຕ່າງກັນຂຶ້ນກັບຄຸນນະສົມບັດຂອງການບໍລິການແລະໄລຍະເວລາທີ່ຂໍໃຊ້ບໍລິການນັ້ນໆໂດຍຈະເກັບເປັນລາຍປີແລະຈະບັນທຶກເປັນຄ່າໃຊ້ຈ່າຍໃນບັນຊີບັດ ຫຼັງຈາກທີ່ທະນາຄານໄດ້ຮັບໃບສະໝັກຂໍໃຊ້ບໍລິການດັ່ງກ່າວເຊິ່ງສະມາຊິກຜູ້ຖືບັດໄດ້ລົງລາຍເຊັນແລ້ວ

e) ທະນາຄານຈະຄິດດອກເບ້ຍໃນອັດຕາ 1.5% ຕໍ່ເດືອນຄິດໄລ່ເອົາຕາມແຕ່ລະມື້ຈາກຍອດໜີ້ຄົງຄ້າງ ທີ່ຍັງບໍ່ໄດ້ຮັບການຊຳລະຢ່າງຄົບຖ້ວນ ພາຍໃນກຳນົດເວລາຕາມທີ່ລະບຸໄວ້ໃນໃບແຈ້ງຖານະການເງິນ ແລະຄິດໄລ່ເລີ່ມຈາກມື້ບັນທຶກລາຍການດັ່ງກ່າວໃນບັນຊີບັດຈົນຮອດມື້ທີ່ໄດ້ຮັບຊຳລະຢ່າງຄົບຖ້ວນ. ນອກເໜືອຈາກນີ້, ຈຳນວນເງິນຕາມລາຍການທີ່ເຮັດຂຶ້ນໃນລະຫວ່າງເດືອນທີ່ຍອດໜີ້ຄົງຄ້າງຍັງບໍ່ໄດ້ຮັບການຊຳລະຢ່າງຄົບຖ້ວນຈະຖືກຄິດດອກເບ້ຍໃນອັດຕາດັ່ງກ່າວຂ້າງເທິງດ້ວຍ ເລີ່ມຈາກມື້ບັນທຶກລາຍການດັ່ງກ່າວໃນບັນຊີບັດ ຈົນຮອດວັນທີ່ຕາມໃບແຈ້ງຖານະການເງິນ. ສະມາຊິກບັດຜູ້ທີ່ໄດ້ຊຳລະຢ່າງຄົບຖ້ວນຕາມກຳນົດເວລາຈະບໍ່ໄດ້ຈ່າຍຄ່າດອກເບ້ຍໃດໆ ເລີ່ມຈາກມື້ບັນທຶກລາຍການດັ່ງກ່າວໃນບັນຊີບັດ ຈົນຮອດວັນທີ່ຄົບກຳນົດຊຳລະຕາມໃບແຈ້ງຖານະການເງິນ. ວັນທີ່ຄົບກ□ານົດຊ□າລະແມ່ນ 20 ມື້ຫຼັງຈາກມື້ອອກໃບແຈ້ງຖານະການເງິນ.


Unit 01, Ban Phakhao, Kaysone Phomvihanh Road, Xaythany District, Vientiane Capital, Lao P.D.R.
Tel:(+856-21) 711 511-533, Fax:(+856-21) 711 500, Email:info@phongsavanhbank.com, www.phongsavanhbank.com

f) ການມາຊຳລະຊ້າ ແມ່ນຈະເກັບຄ່າທຳນຽມ 1% ຕໍ່ເດືອນຂອງຍອດຄົງຄ້າງໃນບັນຊີບັດ ຫຼືຕໍ່າສຸດ 25,000 ກີບ ແລະສູງສຸດແມ່ນ 250,000 ກີບ.

g) ກໍລະນີສະມາຊິກຜູ້ຖືບັດຮ້ອງຂໍສຳເນົາໃບຢັ້ງຢືນການຂາຍ(Sales Draft) ທະນາຄານຈະຄິດຄ່າບໍລິການ 40,000 ກີບ ຕໍ່ 1 ສະບັບ. ຢ່າງໃດກໍ່ຕາມ ທະນາຄານຈະພິຈາລະນາບໍ່ເກັບເອົາຄ່າບໍລິການດັ່ງກ່າວ ຫາກພົບໃນພາຍຫຼັງວ່າການຮ້ອງຂໍດັ່ງກ່າວຍ້ອນສາເຫດຈາກການຜິດພາດຈາກການດຳເນີນງານ.

h) ກໍລະນີສະມາຊິກຜູ້ຖືບັດຮ້ອງຂໍສຳເນົາໃບສະຫຼຸບບັນຊີ(Card Statement) ທະນາຄານຈະຄິດຄ່າບໍລິການ 20,000 ກີບ ຕໍ່ 1 ສະບັບ. ຢ່າງໃດກໍ່ຕາມ ທະນາຄານຈະພິຈາລະນາບໍ່ເກັບເອົາຄ່າບໍລິການດັ່ງກ່າວຫາກພົບໃນພາຍຫຼັງວ່າການຮ້ອງຂໍດັ່ງກ່າວຍ້ອນສາເຫດຈາກການຜິດພາດຈາກການດຳເນີນງານ.

i) ຄ່າໃຊ້ຈ່າຍທາງກົດໝາຍແລະຄ່າໃຊ້ຈ່າຍອື່ນໆທີ່ອາດເກີດຂຶ້ນຈາກການບັງຄັບໃຊ້ສິດຂອງທະນາຄານຕາມຂໍ້ຕົກລົງສະບັບນີ້ ແລະການເກັບກູ້ເອົາໜີ້ທີ່ຍັງຄົງຄ້າງໃນບັນຊີບັດທັງໝົດ ຫຼືບາງສ່ວນຂອງສະມາຊິກຜູ້ຖືບັດກັບຄືນໃຫ້ທະນາຄານ.

j) ຄ່ານາຍໜ້າແລະຄ່າໃຊ້ຈ່າຍອື່ນໆທີ່ອາດເກີດຂຶ້ນ ໃນກໍລະນີທີ່ທະນາຄານແຕ່ງຕັ້ງໃຫ້ຕົວແທນໄປເກັບກູ້ເອົາໜີ້ທີ່ຍັງຄົງຄ້າງໃນບັນຊີບັດທັງໝົດ ຫຼືບາງສ່ວນຂອງສະມາຊິກຜູ້ຖືບັດກັບຄືນໃຫ້ທະນາຄານ.

k) ຄ່າທຳນຽມການປ່ຽນບັດໃໝ່ແມ່ນ 40,000 ກີບຕໍ່ບັດ

l) ຄ່າທຳນຽມ ແລະຄ່າໃຊ້ຈ່າຍໃດໆທີ່ທະນາຄານພິຈາລະນາເຫັນວ່າສົມຄວນເກັບເອົາຈາກການບໍລິການໃດໜຶ່ງ ທີ່ໃຫ້ແກ່ສະມາຊິກບັດໃນຊ່ວງເວລາໃດເວລາໜຶ່ງ.

m) ຄ່າສົ່ງບັດໃຫ້ເຈົ້າຂອງບັດແມ່ນ 100,000 ກີບຕໍ່ບັດ, ຫັກເອົາຈາກບັນຊີບັດດັ່ງກ່າວ. ການປ່ຽນແປງຄ່າສົ່ງແມ່ນສາມາດເຮັດໄດ້ໂດຍບໍ່ຕ້ອງແຈ້ງໃຫ້ຮູ້ລ່ວງໜ້າ.

n) ອັດຕາການແລກປ່ຽນເງິນຕາແມ່ນຂຶ້ນກັບວີຊ້າ(Visa International Service Association) ຫຼືມາສເຕີ້ຄາດ (MasterCard International Service Association) ບວກ ຄ່າທ□ານຽມການເຮັດລາຍການຢູ່ຕ່າງປະເທດ1% ຂອງຈຳນວນເງິນຕາມລາຍການທີ່ໃຊ້ບັດ.

o) ຄ່າທຳນຽມຂອງການໃຊ້ບັດເກີນວົງເງິນທີ່ກຳນົດແມ່ນ40,000ກີບຕໍ່ຄັ້ງ.

11.2ຄ່າທຳນຽມ ແລະຄ່າໃຊ້ຈ່າຍຕ່າງໆທີ່ກ່າວມາຂ້າງເທິງອາດມີການປ່ຽນແປງໄດ້ຕະຫຼອດເວລາຕາມການເຫັນດີຂອງທະນາຄານ.

## 12 ການຍົກເວັ້ນຄວາມຮັບຜິດຊອບ

12.1 ທະນາຄານຈະບໍ່ຮັບຜິດຊອບໃນກໍລະນີເກີດຄວາມເສຍຫາຍ ຫຼືການສູນເສຍທີ່ເກີດຂຶ້ນກັບສະມາຊິກຜູ້ຖືບັດອັນເນື່ອງມາຈາກຖ້ອຍຄຳ ຫຼືຂໍ້ຄວາມ ຫຼືການຕິດຕໍ່ພົວພັນທີ່ກ່ຽວກັບຫຼືເກີດຂຶ້ນຈາກການບໍ່ຕໍ່ບັດໃໝ່ , ການຍົກເລີກບັດ, ການຮຽກເກັບຄືນ, ການຢຸດຊົ່ວຄາວຫຼື ຈຳກັດການໃຊ້ບັດຂອງສະມາຊິກຜູ້ຖືບັດຫຼັກຫຼືສະມາຊິກຜູ້ຖືບັດເສີມລວມເຖິງ(ແຕ່ບໍ່ໄດ້ຈຳກັດພຽງເທົ່ານີ້), ການສະແດງເລກທີຂອງບັດທີ່ຖືກຍົກເລີກດັ່ງກ່າວໄວ້ໃນໃບແຈ້ງການຍົກເລີກບັດ (Cancellation Bulletin).

12.2 ທະນາຄານຈະບໍ່ຮັບຜິດຊອບໃນຄວາມເສຍຫາຍ ຫຼືການສູນເສຍທີ່ເກີດຂຶ້ນກັບສະມາຊິກຜູ້ຖືບັດທີ່ເກີດຈາກການກະທຳຫຼືການລະເລີຍຂອງຮ້ານຄ້າຫຼືໜ່ວຍບໍລິການຖອນເງິນສົດລ່ວງໜ້າ, ບໍ່ວ່າດ້ວຍສາເຫດໃດ ລວມເຖິງການກັກບັດໄວ້ຫຼືການປະຕິເສດທີ່ຈະຮັບບັດຫຼືການໃຊ້ຖ້ອຍຄຳ, ຂໍ້ຄວາມ ຫຼືການຕິດຕໍ່ພົວພັນໃດໆ ທີ່ເຮັດໂດຍຮ້ານຄ້າຫຼືໜ່ວຍບໍລິການຖອນເງິນສົດລ່ວງໜ້ານັ້ນ, ຫຼືຂໍ້ບົກຜ່ອງຕ່າງໆໃນການສັ່ງຊື້ ຫຼືການບໍລິການທີ່ໄດ້ຮັບ. ສະມາຊິກບັດຈະຕ້ອງດຳເນີນການກ່ຽວກັບຂໍ້ຮຽກຮ້ອງ ຫຼືຂໍ້ຜິດພາດໂດຍກົງນຳທາງຮ້ານຄ້າຫຼືໜ່ວຍບໍລິການຖອນເງິນສົດລ່ວງໜ້ານັ້ນໆ ແລະສະມາຊິກຜູ້ຖືບັດຕ້ອງບໍ່ໃຊ້ກໍລະນີດັ່ງກ່າວມາເປັນສາເຫດ ຫຼືຂໍ້ອ້າງໃນການພັກການຊຳລະໜີ້ຄົງຄ້າງ ດັ່ງທີ່ລະບຸໄວ້ໃນຂໍ້7 ຂ້າງເທິງ ກັບທະນາຄານ.

12.3 ທະນາຄານຈະບໍ່ຮັບຜິດຊອບໃນກໍລະນີເກີດຄວາມເສຍຫາຍຫຼືການສູນເສຍທີ່ເກີດຂຶ້ນກັບສະມາຊິກ ຜູ້ຖືບັດກ່ຽວກັບການຢຸດຊົ່ວຄາວ, ການເພີກຖອນຫຼືການຍົກເລີກການໃຫ້ບໍລິການປະເພດໃດໜຶ່ງຂອງບັດ ແລະສະມາຊິກຜູ້ຖືບັດເຫັນດີໃຫ້ທະນາຄານມີສິດທີ່ຈະຕັດສິນໃຈກ່ຽວກັບການຢຸດຊົ່ວຄາວ, ການເພີກຖອນຫຼືການຍົກເລີກການໃຫ້ບໍລິການປະເພດໃດໜຶ່ງຂອງບັດ ໂດຍທີ່ບໍ່ຕ້ອງແຈ້ງໃຫ້ສະມາຊິກບັດຮູ້ລ່ວງໜ້າ.


Unit 01, Ban Phakhao, Kaysone Phomvihanh Road, Xaythany District, Vientiane Capital, Lao P.D.R.
Tel:(+856-21) 711 511-533, Fax:(+856-21) 711 500, Email:info@phongsavanhbank.com, www.phongsavanhbank.com

12.4 ສະມາຊິກຜູ້ຖືບັດຫຼັກແລະ/ຫຼືສະມາຊິກຜູ້ຖືບັດເສີມເຫັນດີທີ່ຈະລະເວັ້ນການຮຽກຮ້ອງເອົາກັບທະນາຄານທັງທາງກົງແລະທາງອ້ອມຈາກການຍົກເລີກບັດຂອງສະມາຊິກລວມເຖິງການຮ້ອງຮຽນວ່າໄດ້ຮັບການດູໝິ່ນຢຽດຢາມ ຫຼືຄວາມເສຍຫາຍບໍ່ວ່າເລື່ອງໃດ .

12.5 ສະມາຊິກບັດຕ້ອງຮັບຜິດຊອບຕໍ່ລາຍການທັງໝົດທີ່ເກີດຂື້ນຈາກການນຳໃຊ້ບັດທີ່ບໍ່ໄດ້ຮັບອະນຸຍາດໃນຂະນະທີ່ບັດຢູ່ໃນການຄອບຄອງ /ດູແລ ແລະ/ຫຼື ການຄວບຄຸມຂອງສະມາຊິກຜູ້ຖືບັດ.

12.6 ທະນາຄານ ຈະບໍ່ຮັບຜິດຊອບໃນການທີ່ສະມາຊິກຜູ້ຖືບັດ ບໍ່ສາມາດດຳເນີນການຕາມພັນທະໃນຂໍ້ຕົກລົງສະບັບນີ້ ຍ້ອນສາເຫດ (ບໍ່ວ່າທາງກົງຫຼືທາງອ້ອມ) ຈາກຄວາມລົ້ມເຫລວຂອງເຄື່ອງຈັກ, ລະບົບປະຕິບັດການຫຼືລະບົບເຊື່ອມຕໍ່ຂໍ້ມູນຫຼືຂໍ້ຜິດພາດທາງອຸດສະຫະກຳຫຼືສາເຫດໃດໆ ທີ່ຢູ່ນອກເໜືອການຄວບຄຸມຂອງທະນາຄານ, ຕົວແທນແລະ/ຫຼືລູກຈ້າງແລະເຖິງແມ່ນວ່າທະນາຄານຈະບໍ່ສາມາດພິມຫຼືສົ່ງໃບສະຫຼຸບຖານະທາງການເງິນໄປຍັງສະມາຊິກຜູ້ຖືບັດ, ແຕ່ຄວາມຮັບຜິດຊອບຂອງສະມາຊິກຜູ້ຖືບັດຕໍ່ຄ່າບໍລິການທີ່ເກີດຂື້ນຍັງຄົງມີຢູ່ຕໍ່ໄປ ແລະເພື່ອຈຸດປະສົງໃນການຄິດໄລ່ຄ່າທຳນຽມການຊຳລະໜີ້ຄົບກຳນົດລ່າຊ້າ ຫຼືເພື່ອຈຸດປະສົງໃນການກຳນົດວັນທີຄົບກຳນົດຊຳລະທະນາຄານພົງສະຫວັນສາມາດເລືອກວັນທີຂອງເດືອນແຕ່ລະເດືອນ ທີ່ຈະໃຫ້ເປັນມື້ສົ່ງໃບສະຫຼຸບຖານະທາງການເງິນ. ສະມາຊິກບັດຈະບໍ່ສາມາດຊະລໍການຊຳລະໃດໆ ໂດຍອ້າງເຫດທີ່ເກີດຈາກຂໍ້ຜິດພາດ.

## 13 ຂໍ້ປີກຍ່ອຍອື່ນໆ

13.1 ການປ່ຽນແປງ

a) ທະນາຄານຂໍສະຫງວນສິດໃນການເພີ່ມຫຼືຍົກເລີກຂໍ້ກຳນົດແລະເງື່ອນໄຂເປັນໄລຍະໄດ້ຕະຫລອດ ເວລາແລະອາດຈະແຈ້ງ ຫຼືປະກາດໃຫ້ສະມາຊິກຜູ້ຖືບັດຮັບຮູ້ໃນການປັບປ່ຽນດັ່ງກ່າວ ກ່ອນມື້ປະຕິບັດຕົວຈິງຕາມແຕ່ທະນາຄານພິຈາລະນາວ່າເໝາະສົມ. ການປ່ຽນແປງຂໍ້ກຳນົດ ແລະເງື່ອນໄຂດັ່ງກ່າວຈະມີຜົນຜູກພັນສະມາຊິກບັດໂດຍສະມາຊິກບັດທີ່ບໍ່ເຫັນດີໃນການປັບປ່ຽນ ແລະແກ້ໄຂຂໍ້ຕົກລົງດັ່ງກ່າວ ສາມາດຍົກເລີກການໃຊ້ບັດໂດຍແຈ້ງມາຍັງທະນາຄານເປັນລາຍລັກອັກສອນ ແລະສົ່ງຄືນບັດທີ່ຕັດອອກເປັນ 2 ສ່ວນຄືນໃຫ້ກັບພະແນກສູນບັດຂອງທະນາຄານທັນທີພ້ອມທັງຊຳລະຍອດຄົງຄ້າງໃນບັນຊີບັດທັງໝົດ.

b) ການເກັບບັດໄວ້ໂດຍບໍ່ສົ່ງຄືນ ຫຼືການນຳໃຊ້ບັດຫລັງຈາກມື້ທີ່ມີການປ່ຽນແປງຂອງຂໍ້ກຳນົດ ແລະເງື່ອນໄຂມີຜົນສັກສິດ ຈະຖືວ່າສະມາຊິກຜູ້ຖືບັດຍອມຮັບການປ່ຽນແປງດັ່ງກ່າວໂດຍບໍ່ມີເງື່ອນໄຂ.

13.2 ການເປີດເຜີຍຂໍ້ມູນ

a) ສະມາຊິກຜູ້ຖືບັດຍິນຍອມວ່າ ຂໍ້ມູນທີ່ທະນາຄານໄດ້ຮັບຈາກໃບສະໝັກນີ້ລວມທັງຂໍ້ມູນຈາກໃບສະໝັກ ແລະຂໍ້ຕົກລົງອື່ນໆເຊິ່ງສະມາຊິກບັດໄດ້ສະໜອງໃຫ້ກັບທະນາຄານ ຫຼືບໍລິສັດໃນກຸ່ມຂອງທະນາຄານ, ອາດຈະນຳໃຊ້ຮ່ວມກັນລະຫວ່າງທະນາຄານກັບບໍລິສັດໃນກຸ່ມຂອງທະນາຄານ.

b) ສະມາຊິກບັດຍິນຍອມໃຫ້ທະນາຄານຮັບເອົາ, ແລກປ່ຽນ, ແຈກຈ່າຍ ຫຼືເປີດເຜີຍຂໍ້ມູນໃດໆ ຂອງສະມາຊິກຜູ້ຖືບັດຫຼືຂໍ້ມູນທາງບັນຊີຂອງສະມາຊິກຜູ້ຖືບັດ, ປະຫວັດທາງການເງິນ ຫຼືປະຫວັດອື່ນໆ ຂອງສະມາຊິກຜູ້ຖືບັດໃຫ້ແກ່ບຸກຄົນທີ 3 ໃດໆ ໄດ້ຕະຫລອດເວລາ ໂດຍບໍ່ໄດ້ຈ□າກັດຢູ່ພຽງ

i.) ສູນຂໍ້ມູນສິນເຊື່ອກາງ ແມ່ນຖືກສ້າງຕັ້ງໂດຍທະນາຄານແຫ່ງສ.ປ.ປ.ລາວຫຼືໜ່ວຍງານສິນເຊື່ອອື່ນໆ ຫຼືສຳນັກງານຕົວແທນທີ່ໄດ້ຮັບອະນຸຍາດໂດຍທະນາຄານແຫ່ງສ.ປ.ປ.ລາວ.

ii.) ຮ້ານຄ້າຕ່າງ ໆ ຫຼືທະນາຄານສະມາຊິກ ຫຼືມາສເຕີ້ຄາດ/ວີຊ່າ ແລະສະມາຊິກຂອງມາສເຕີ້ຄາດ/ວີຊ່າໃດໆທີ່ຍອມຮັບການນຳໃຊ້ບັດ.

iii.) ກຸ່ມບໍລິສັດຂອງທະນາຄານ, ຕົວແທນ, ລູກຈ້າງ ແລະ/ຫຼືບຸກຄົນອື່ນເຊິ່ງທະນາຄານມີຄວາມກ່ຽວຂ້ອງໃນທາງສັນຍາດ້ວຍ ອາດຈະຕ້ອງເປີດເຜີຍຂໍ້ມູນດັ່ງກ່າວໃຫ້ທະນາຄານໄດ້ຕະຫຼອດເວລາ.

13.3 ກົດໝາຍ

ຂໍ້ຕົກລົງສະບັບນີ້ຈະຖືວ່າເປັນສັນຍາທີ່ເຮັດຂື້ນພາຍໃຕ້ກົດໝາຍຂອງ ສ.ປ.ປ.ລາວ, ການບັງຄັບໃຊ້ ແລະການຕີຄວາມບໍ່ວ່າເພື່ອວັດຖຸປະສົງໃດ ໃຫ້ເປັນໄປຕາມກົດໝາຍຂອງ ສ.ປ.ປ.ລາວ ແລະຄູ່ກໍລະນີຕົກລົງທີ່ຈະຮ້ອງຟ້ອງຕໍ່ເຂດອຳນາດສານໃນ ສ.ປ.ປ.ລາວ.

13.4 ຄ່າປັບໄໝການຊົດເຊີຍຄ່າເສຍຫາຍ



Unit 01, Ban Phakhao, Kaysone Phomvihanh Road, Xaythany District, Vientiane Capital, Lao P.D.R.
Tel:(+856-21) 711 511-533, Fax:(+856-21) 711 500, Email:info@phongsavanhbank.com, www.phongsavanhbank.com

ບໍ່ວ່າຈະມີຂໍ້ກຳນົດໃດໆ ໃນຂໍ້ຕົກລົງສະບັບນີ້, ສະມາຊິກຜູ້ຖືບັດຍິນຍອມທີ່ຈະຊົດເຊີຍຄວາມສູນເສຍ, ຄວາມເສຍຫາຍ, ຕົ້ນທຶນ, ຄ່າໃຊ້ຈ່າຍ, ຄ່າທຳນຽມ ແລະຄ່າປັບໄໝເຊິ່ງອາດຈະເກີດຂຶ້ນກັບທະນາຄານໃນການຮຽກເກັບໜີ້ຄົງຄ້າງໃນບັນຊີບັດຕາມທີ່ກຳນົດໄວ້ໃນຂໍ້ທີ 7 ນີ້ ລວມເຖິງການບັງຄັບໃຊ້ຂໍ້ກຳນົດຂອງຂໍ້ຕົກລົງນີ້ກັບສະມາຊິກບັດຫຼັກ ແລະສະມາຊິກບັດເສີມ.

13.5 ແຈ້ງການ

ໃບແຈ້ງຍອດລວມລາຍການນຳໃຊ້ບັດ, ການແຈ້ງການ ແລະຂະບວນການທາງກົດໝາຍຕ່າງໆ ເຫລົ່ານີ້ຈະຖືວ່າສະມາຊິກບັດຫຼັກ ແລະສະມາຊິກບັດເສີມໄດ້ຮັບຫລັງຈາກວັນທີຕາມໃບແຈ້ງຍອດລວມລາຍການໃຊ້ບັດ ແລະ/ຫຼືຕາມທີ່ຢູ່ທີ່ໄດ້ແຈ້ງມາຍັງສູນບັດຂອງທະນາຄານຕາມທີ່ຢູ່ທາງອີເມລທີ່ໄດ້ຮັບຄັ້ງຫຼ້າສຸດ. ທັງສອງຝ່າຍຕົກລົງວ່າການດຳເນີນການທາງກົດໝາຍໃດໆ ທີ່ເກີດຂຶ້ນມາຈາກການຮຽກຮ້ອງຕາມຂໍ້ຕົກລົງສະບັບນີ້ຈະມີຜົນກັບສະມາຊິກບັດໂດຍການສົ່ງເອກະສານໄປທາງໄປສະນີ ຫຼືໂດຍວິທີອື່ນໃດ ໄປຍັງທີ່ຢູ່ຂອງສະມາຊິກຜູ້ຖືບັດຕາມທີ່ໄດ້ໃຫ້ໄວ້ໃນໃບສະໝັກ ຫຼື ທີ່ຢູ່ປະຈຸບັນທີ່ແຈ້ງຄັ້ງຫຼ້າສຸດ ໂດຍສະມາຊິກບັດໃຫ້ກັບທະນາຄານ ແລະການແຈ້ງການໂດຍວິທີດັ່ງກ່າວ ຈະຖືວ່າມີຜົນໃຊ້ໄດ້ເຖິງວ່າເອກະສານດັ່ງກ່າວຈະຖືກສົ່ງກັບຄືນມາຍັງທະນາຄານໂດຍສົ່ງບໍ່ເຖິງຜູ້ຮັບ.

13.6 ເຫດການສຸດວິໄສ

ທະນາຄານຈະບໍ່ຮັບຜິດຊອບຕໍ່ຄວາມລົ້ມເຫລວໃນການດຳເນີນການຕາມພັນທະໜ້າທີ່ໃນການໃຫ້ບໍລິການບໍ່ວ່າຈະເປັນທາງກົງຫຼືທາງອ້ອມ ອັນມີສາເຫດມາຈາກເຫດສຸດວິໄສ, ສົງຄາມ(ບໍ່ວ່າຈະປະກາດຫຼືບໍ່ໄດ້ປະກາດ), ການປະທ້ວງ, ການຈາລະຈົນ, ສ້າງຄວາມປັ່ນປ່ວນ, ການກໍ່ການຮ້າຍ, ການວ່າງງານ, ການປິດໂຮງງານຂອງນາຍຈ້າງ, ໄຟໄໝ້, ອຸບັດຕິເຫດຈາກເຄື່ອງຈັກຫຼືເລື່ອງໃດໆ ທີ່ນອກເໜືອການຄວບຄຸມຂອງທະນາຄານ.

13.7 ຜົນຜູກພັນ

ພາລະຜູກພັນຂອງສະມາຊິກບັດຫລັກ ແລະສະມາຊິກບັດເສີມຈະມີຜົນຜູກພັນກັບຕົວແທນສ່ວນຕົວ, ທາຍາດ ຫຼືຜູ້ຮັບມໍລະດົກຂອງສະມາຊິກບັດຫລັກ ແລະສະມາຊິກບັດເສີມນັ້ນໆດ້ວຍ.

13.8 ການອະນຸມັດການຕໍ່ອາຍຸບັດ

ສະມາຊິກຜູ້ຖືບັດຕົກລົງໃຫ້ທະນາຄານຕໍ່ອາຍຸບັດໃຫ້ສະມາຊິກບັດຫລັກ ແລະສະມາຊິກບັດເສີມເມື່ອບັດໝົດອາຍຸ. ແຕ່ເຖິງຈະມີການອະນຸມັດເຊັ່ນນັ້ນກໍ່ຕາມ, ທະນາຄານຍັງຄົງມີສິດທີ່ຈະຍັບຍັ້ງ ຫຼືປະຕິເສດທີ່ຈະຕໍ່ອາຍຸບັດກໍ່ໄດ້ ຂຶ້ນຢູ່ກັບການພິຈາລະນາຂອງທະນາຄານແຕ່ພຽງຝ່າຍດຽວ.

13.9 ສິດທິໃນການຮວບຮວມບັນຊີເງິນຝາກທັງໝົດ ແລະ ການກັກບັນຊີເງິນຝາກດັ່ງກ່າວໃນທະນາຄານ

ສະມາຊິກບັດເຫັນດີໃຫ້ທະນາຄານມີສິດຢ່າງສົມບູນໂດຍບໍ່ຕ້ອງແຈ້ງໃຫ້ສະມາຊິກຜູ້ຖືບັດຮູ້ລ່ວງໜ້າເຖິງການລະງັບຫຼືການຮວບຮວມທຸກບັນຊີຂອງສະມາຊິກບັດລວມທັງບັນຊີໃນຊື່ຂອງທະນາຄານຫຼືຂອງສະມາຊິກບັດຮ່ວມກັບຜູ້ອື່ນ, ເຊິ່ງບັນຊີດັ່ງກ່າວມີການເປີດຮ່ວມກັນໃນຊື່ຂອງສະມາຊິກບັດຫລັກ ແລະສະມາຊິກບັດເສີມ (ບໍ່ວ່າຈະເປັນຝາກກະແສລາຍວັນ, ຝາກປະຫຍັດ, ກູ້ຢືມຫຼືໃນລັກສະນະອື່ນໃດ ອາດມີການແຈ້ງໃຫ້ຮູ້ຫຼືບໍ່ວ່າໃນສະກຸນເງິນໃດໆ ) ບໍ່ວ່າຈະຢູ່ໃນລັກສະນະແນວໃດ ແລະການລະງັບຫຼືການໂອນທັງໝົດຂອງສະຖານະສິນເຊື່ອຂອງບັນຊີຫຼືໃນທາງຂອງຄວາມພໍໃຈຂອງສະມາຊິກບັດ ຕ້ອງໄດ້ຮັບຜິດຊອບຕໍ່ທະນາຄານແຕ່ບໍ່ໄດ້ຈຳກັດສະເພາະການຫຼຸດຫຼືການເບີກເງິນເກີນບັນຊີເຊິ່ງສະມາຊິກບັດຢູ່ພາຍໃຕ້ຊື່ທະນາຄານດຽວກັນ.

13.10 ຂໍ້ຍົກເວັ້ນ

ເຖິງແມ່ນວ່າຈະມີບົດບັນຍັດໃດໃນຂໍ້ຕົກລົງສະບັບນີ້ທີ່ແຍ້ງກັບຄວາມຕາມຂໍ້ນີ້, ແຕ່ການລົ້ມເຫລວຫຼືການລ່າຊ້າໃນການບັງຄັບໃຊ້ສິດ ຫຼືການໃຊ້ອຳນາດ ຫຼືການແກ້ໄຂຂອງທະນາຄານ ກໍ່ຈະບໍ່ຖືວ່າເປັນການຍົກເວັ້ນສິດ ຫຼືອຳນາດນັ້ນ ລວມທັງບໍ່ເປັນການທຳໃຫ້ສິດຫຼືອຳນາດນັ້ນເສື່ອມຄ່າລົງ.

13.11 ການສະຫງວນສິດແລະຜົນປະໂຫຍດທີ່ຄວນຈະໄດ້ຮັບ

ບໍ່ວ່າຈະມີຂໍ້ກຳນົດໃດໆ ໃນຂໍ້ຕົກລົງສະບັບນີ້, ສິດທິແລະຜົນປະໂຫຍດທີ່ຄວນຈະໄດ້ຮັບໃດໆ ຂອງທະນາຄານຈະມີຜົນໃຊ້ບັງຄັບໄດ້ຢ່າງເຕັມທີ່ຕະຫຼອດໄປເຖິງແມ່ນວ່າຈະມີການຍົກເລີກຫຼືລະງັບບັດໂດຍທະນາຄານ.

13.12 ໃບຮັບຮອງການເປັນໜີ້



Unit 01, Ban Phakhao, Kaysone Phomvihanh Road, Xaythany District, Vientiane Capital, Lao P.D.R.
Tel:(+856-21) 711 511-533, Fax:(+856-21) 711 500, Email:info@phongsavanhbank.com, www.phongsavanhbank.com

ໃບຮັບຮອງທີ່ໄດ້ລົງນາມໂດຍເຈົ້າໜ້າທີ່ຜູ້ມີອຳນາດຂອງທະນາຄານທີ່ໄດ້ລະບຸເຖິງຈຳນວນເງິນທີ່ຄົບກຳນົດຊຳລະ ແລະເປັນໜີ້ທະນາຄານໃນເວລານັ້ນ ສາມາດເປັນຫຼັກຖານທີ່ສະແດງວ່າຈຳນວນເງິນທີ່ປະກົດຢູ່ໃນໃບຮັບຮອງນັ້ນຖືກຕ້ອງ ແລະຄົບກຳນັດຊຳລະ.

13.13 ການແຕ່ງຕັ້ງຕົວແທນ

ໃນການຂະຫຍາຍແລະບໍ່ແມ່ນເຮັດໃຫ້ເສຍສິດທີ່ມີຢູ່ໃນຂໍ້ຕົກລົງສະບັບນີ້, ທະນາຄານມີສິດທີ່ຈະແຕ່ງຕັ້ງຕົວແທນໃນການຮຽກເກັບຍອດຄົງຄ້າງໃນບັນຊີບັດທີ່ຄົບກຳນົດຊຳລະຈາກສະມາຊິກບັດໃຫ້ທະນາຄານ.

13.14 ບັນຊີຕັ້ງພັກ

ເງິນຈຳນວນໃດໆ ທີ່ທະນາຄານໄດ້ຮັບຊຳລະຈາກສະມາຊິກຜູ້ຖືບັດຕາມຂໍ້ຕົກລົງສະບັບນີ້ທະນາຄານອາດຈະເກັບຮັກສາໄວ້ໃນບັນຊີຕັ້ງພັກ ໂດຍບໍ່ມີດອກເບ້ຍຕາມເວລາທີ່ທະນາຄານຄິດວ່າເໝາະສົມແລະທະນາຄານສາມາດນຳເງິນໃນບັນຊີດັ່ງກ່າວມາຊຳລະຄ່າໃຊ້ຈ່າຍ ຫຼືພາລະໜີ້ສິນທີ່ເກີດຂື້ນໂດຍສະມາຊິກບັດ.

13.15 ການຍິນຍອມ:

ຜູ້ຖືບັດ ແລະທະນາຄານຂໍຢັ້ງຢືນວ່າໄດ້ອ່ານ, ເຂົ້າໃຈ ແລະຕົກລົງເຫັນດີຕາມເງື່ອນໄຂທັງໝົດທີ່ກ່າວມາຂ້າງເທິງ, ທັງສອງຝ່າຍຜູ້ຖືບັດ ແລະທະນາຄານຈຶ່ງຕົກລົງຍິນຍອມຈະຈັດຕັ້ງປະຕິບັດຕາມເງື່ອນໄຂດັ່ງກ່າວນີ້ຢ່າງເຂັ້ມງວດ ລວມທັງບັນດາຂໍ້ກຳນົດເງື່ອນໃຂອື່ນໆ ຂອງທະນາຄານ ແລະອົງການ ແລະສະຖາບັນອອກບັດຂອງສາກົນ.

**ສູນບັດ**
**ທະນາຄານ ພົງສະຫວັນ ຈຳກັດ**


Unit 01, Ban Phakhao, Kaysone Phomvihanh Road, Xaythany District, Vientiane Capital, Lao P.D.R.
Tel:(+856-21) 711 511-533, Fax:(+856-21) 711 500, Email:info@phongsavanhbank.com, www.phongsavanhbank.com